ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ເລກທີ 1273 -/ສຄອຊ.ຜສຂ5

ນະຄອນຫຼວງວຽງຈັນ, ວັນທີ 20 SEP 2023

## ແຈ້ງການ

**ເຖິງ: - ສະພາການຄ້າ ແລະ ອຸດສາຫະກຳ ແຂວງ**

**- ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງ**

**- ກຸ່ມ ແລະ ສະມາຄົມ ທີ່ເປັນສະມາຊິກ ສຄອຊ**

**- ບໍລິສັດທີ່ເປັນສະມາຊິກ ຂອງ ສຄອຊ**

**ເລື່ອງ: ການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ**

- ອີງຕາມ ດຳລັດ ສະບັບເລກທີ 237/ນຍ ລົງວັນທີ 18/05/2023 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
- ອີງຕາມ ໜັງສືແຈ້ງການຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ເລື່ອງ ການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 1941/ຫອຄ, ລົງວັນທີ 05 ກັນຍາ 2023.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອເປັນຂໍ້ມູນໃຫ້ແກ່ການຄຸ້ມຄອງຕິດຕາມການເຄື່ອນໄຫວ ແລະ ຊຳລະ/ຮັບຊຳລະເງິນຕາຕ່າງປະເທດຈາກການນຳເຂົ້າ-ສົ່ງອອກສິນຄ້າ ຂອງວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນຂອບເຂດທົ່ວປະເທດ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ຈຳກັດການຄ້ານອກລະບົບ, ສຄອຊ ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບດັ່ງນີ້:

1. ມອບໃຫ້ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ກຸ່ມ ແລະ ສະມາຄົມທີ່ເປັນສະມາຊິກ ສຄອຊ ແຈ້ງໃຫ້ບັນດາວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ທີ່ເປັນສະມາຊິກຂອງຕົນ ໃຫ້ລົງທະບຽນນຳ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023.
2. ແຈ້ງມາຍັງບໍລິສັດທີ່ເປັນສະມາຊິກຂອງ ສຄອຊ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດໃນການລົງທະບຽນນຳກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023.
3. ລາຍລະອຽດສະເພາະໝວດສິນຄ້າຫຼັກທີ່ຕ້ອງລົງທະບຽນ ດັ່ງນີ້:

| ລ/ດ | ປະເພດລາຍການສິນຄ້າ | ໝວດລະຫັດພາສີ |
|---|---|---|
| 1 | ແຮ່ທາດ | 2601-2617 ຍົກເວັ້ນ 2612 |
| 2 | ໄຟຟ້າ | 27160000 |
| 3 | ໄມ້ ແລະ ຜະລິດຕະພັນໄມ້ | 4401-4421,4701-4707,<br>4801-4812,94 |
| 4 | ສິ້ນສ່ວນ ແລະ ອຸປະກອນເອເລັກໂຕຣນິກ, ເຄື່ອງອຸປະກອນໄຟຟ້າ | 8501-8548 |
| 5 | ຢາສູບ | 240220 |
| 6 | ເຄື່ອງດື່ມທີ່ມີທາດເຫຼົ້າ | 2203 ຫາ 2206 ຫຼື 2208 |

1) ວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກ ລາຍການສິນຄ້າທີ່ລະບຸໄວ້ໃນຕາຕະລາງຂ້າງເທິງ ຕ້ອງລົງທະບຽນໃຫ້ສຳເລັດ ກ່ອນວັນທີ **31 ຕຸລາ 2023**. ສຳລັບກິດຈະການອື່ນທີ່ບໍ່ໄດ້ນອນໃນລາຍການສິນຄ້າຂ້າງເທິງ ແມ່ນສາມາດລົງທະບຽນໄດ້ເຊັ່ນດຽວກັນຈົນກວ່າຈະມີການປ່ຽນແປງ.

2) ໃຫ້ວິສາຫະກິດ ປະກອບເອກະສານແຈ້ງລົງທະບຽນ ຕາມແບບພິມທີ່ຄັດຕິດມາພ້ອມນີ້ (ພ້ອມທັງສົ່ງຊອບກອບປີ້) ມາໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ໂດຍກົງ ຫຼື ສົ່ງຜ່ານອີເມວ: imexdiv@laomoic.org ຫຼື ຕິດຕໍ່ພົວພັນກັບພະນັກງານຜູ້ຮັບຜິດຊອບ ໂທ: 020 9699 6565 ຫຼື 02055510038 ຫຼື 02056287584 ຫຼື 02095914789. ພາຍຫຼັງທີ່ຍື່ນເອກະສານແລ້ວແມ່ນໃຫ້ບໍລິສັດພົວພັນກັບກົມການນຳເຂົ້າ ແລະ ສົ່ງອອກເພື່ອປະສານເອົາໃບຢັ້ງຢືນການລົງທະບຽນ.

3) ວິສາຫະກິດໃດທີ່ປະກອບເອກະສານ ຫຼື ຂໍ້ມູນບໍ່ຄົບຖ້ວນ ແມ່ນຈະບໍ່ໄດ້ຮັບການລົງທະບຽນ ແລະ ຈະບໍ່ສາມາດດຳເນີນການນຳເຂົ້າ ແລະ ສົ່ງອອກສິນຄ້າໄດ້ເທື່ອ ຈົນກວ່າຈະສຳເລັດການລົງທະບຽນ.

4) ວິສາຫະກິດທີ່ສຳເລັດການລົງທະບຽນແລ້ວ ຕ້ອງໃຫ້ແຈ້ງທະນາຄານແຫ່ງ ສປປ ລາວ ກ່ຽວກັບເລກບັນຊີເງິນຝາກທັງໝົດທີ່ໄດ້ເປີດໄວ້ກັບທະນາຄານທຸລະກິດ ເພື່ອຂໍໜັງສືຢັ້ງຢືນໄປແຈ້ງຕໍ່ທະນາຄານທຸລະກິດໃຫ້ຫັນບັນຊີເງິນຝາກທີ່ກຳລັງນຳໃຊ້ຢູ່ນັ້ນ ເປັນບັນຊີເງິນຝາກສະເພາະກ່ຽວກັບການນຳເຂົ້າ-ສົ່ງອອກ.

➢ ແບບຟອມການລົງທະບຽນ ແລະ ແບບຟອມຕົວຢ່າງໃນການລົງທະບຽນແມ່ນ ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ**

**ເລຂາທິການ**

ວິໄລວັນ ວົງໄຊ

(ເອກະສານຕິດຄັດ)

ຖະໜົນ ໄກສອນພົມວິຫານ, ບ. ໂພນພະເນົາ, ມ. ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປລາວ P.O Box 4596
ໂທ: (856-21) 453 312-14, ແຟັກ (856-21) 452 58o, Email: info@lnccl.la, www.lncci.la